ລັດຖະບານອິສຕຣາລີ ສະໜັບສະໜູນລັດຖະບານ ແຫ່ງ ສປປ ລາວ ໃນການຫຼຸດຜ່ອນກໍລະນີໄຂ້ຍຸງລາຍ ໂດຍການນຳໃຊ້ວິທີການໂວລບັກເຄຍຂອງໂຄງການຄວບຄຸມປະຊາກອນຍຸງໂລກ

(1). ຍຸງລາຍບ້ານທີ່ມີໂວລບັກເຄຍ ຖືກປ່ອຍອອກຈາກຈອກປ່ອຍ ຍຸງໃນເຂດພື້ນທີ່ໂຄງການ ໃນໄລຍະທີ່ໜຶ່ງຂອງໂຄງການ

ນະຄອນຫຼວງວຽງຈັນ, 12 ມີນາ 2024 - ໃນຄວາມພະຍາຍາມທີ່ຈະຊ່ວຍລັດຖະບານແຫ່ງ ສປປ ລາວ ໃນການຄວບຄຸມໄຂ້ຍຸງລາຍ ແລະ ພະຍາດອື່ນໆທີ່ມີຍຸງເປັນພາຫະນຳເຊື້ອຢູ່ໃນນະຄອນຫຼວງວຽງຈັນ ແລະ ຈຸດແຜ່ລະບາດອື່ນໆທົ່ວປະເທດລາວ, ລັດຖະບານແຫ່ງອິສຕຣາລີ, ມູນນະລິທິກະແລັສປີ, ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ ແລະ ໂຄງການຄວບຄຸມປະຊາກອນຍຸງໂລກຈະສະໜັບສະໜູນ 3,7 ລ້ານໂດອິສຕຣາລີ ໃນການເພີ່ມຂອບເຂດການນຳໃຊ້ນະວັດຕະກຳຂອງອິສຕຣາລີ ໃນການຄວບຄຸມໄຂ້ຍຸງລາຍ.

ນະວັດນະກຳດັ່ງກ່າວແມ່ນຖືກພັດທະນາ ໂດຍໂຄງການຄວບຄຸມປະຊາກອນຍຸງໂລກ ທີ່ມະຫາວິທະຍາໄລໂມນາຊ ປະເທດອິສຕຣາລີ. ນະວັດຕະກຳດັ່ງກ່າວແມ່ນການປ່ອຍຍຸງລາຍບ້ານທີ່ມີເຊື້ອແບັກທີເຣຍ ໂວລບັກເຄຍ ຊຶ່ງຈະຊ່ວຍໃນການຫຼຸດຜ່ອນການສົ່ງຕໍ່ເຊື້ອພະຍາດໄຂ້ຍຸງລາຍ ແລະ ພະຍາດອື່ນທີ່ມີຍຸງເປັນພາຫະນຳເຊື້ອ. ເຊື້ອແບັກທີເຣຍ ໂວລບັກເຄຍ ນີ້ແມ່ນເປັນທຳມະຊາດ ແລະ ປອດໄພຕໍ່ລະບົບນິເວດ ແລະ ມະນຸດ.

ອີງຕາມບົດລາຍງານຂອງອົງການອານະໄມໂລກ, ພະຍາດໄຂ້ຍຸງລາຍແມ່ນຈັດຢູ່ໃນສິບຄວາມສ່ຽງດ້ານສຸຂະພາບທີ່ສຸດໃນໂລກ ແລະ ຍັງເປັນພະຍາດທີ່ແຜ່ລະບາດໄດ້ໄວ. ການລະບາດຂອງພະຍາດດັ່ງກ່າວນີ້ແມ່ນສ້າງພາລະໃຫ້ແກ່ລະບົບສາທາລະນະສຸກ, ເຮັດໃຫ້ເກີດການສູນເສຍທາງດ້ານເສດຖະກິດ ແລະ ການສຶກສາ ແລະ ຍັງສ້າງຄວາມອັນຕະລາຍຫຼາຍທີ່ສຸດໃຫ້ແກ່ເດັກນ້ອຍ ແລະ ແມ່ຍິງ. ອັດຕາການເກີດຂອງພະຍາດໄຂ້ຍຸງລາຍໃນທົ່ວໂລກແມ່ນເພີ່ມຂຶ້ນ ເນື່ອງຈາກການປ່ຽນແປງຂອງສະພາບດິນຟ້າອາກາດ, ການຂະຫຍາຍຕົວຂອງຕົວເມືອງ ແລະ ປະສິດທິພາບຂອງວິທີການຄວບຄຸມຍຸງລາຍ ໃນປັດຈຸບັນແມ່ນຍັງມີຂໍ້ຈຳກັດ. ໃນແຕ່ລະປີຈະມີຜູ້ຕິດເຊື້ອພະຍາດໄຂ້ຍຸງລາຍປະມານ 400 ລ້ານຄົນທົ່ວໂລກ.

ໃນ ສປປ ລາວ, ພະຍາດໄຂ້ຍຸງລາຍຖືເປັນພະຍາດຕິດແປດອີກພະຍາດໜຶ່ງທີ່ເປັນບັນຫາໃຫຍ່ທີ່ສຸດ ໂດຍອີງຕາມຂໍ້ມູນການແຜ່ລະບາດຄັ້ງໃຫຍ່ ໃນປີ 2019 ຊຶ່ງມີຜູ້ຕິດເຊື້ອທັງໝົດ 39.091 ກໍລະນີ ແລະ ເສຍຊີວິດ 76 ຄົນ, ໃນປີ 2022 ມີຜູ້ຕິດເຊື້ອຈຳນວນ 33.103 ກໍລະນີ ແລະ ໃນນັ້ນ ມີຜູ້ເສຍຊີວິດ 24 ຄົນ. ນອກຈາກນັ້ນ, ໃນປີ 2023, ປະເທດລາວ ໄດ້ບັນທຶກຜູ້ຕິດເຊື້ອໄຂ້ຍຸງລາຍໄດ້ 35.317 ກໍລະນີ ແລະ ມີຜູ້ເສຍຊີວິດຈຳນວນ 20 ຄົນ. ເປັນທີ່ຮູ້ກັນດີວ່າຈຳນວນຜູ້ປ່ວຍໄຂ້ຍຸງລາຍທີ່ຖືກເກັບກຳ ແລະ ລາຍງານນັ້ນອາດຈະຍັງບໍ່ໄດ້ລວມເອົາກໍລະນີທີ່ບໍ່ມີອາການຮ້າຍແຮງ ແລະ ບໍ່ໄດ້ມາໂຮງໝໍ ເພື່ອປິ່ນປົວ ແລະ ຕາມບົດຄົ້ນຄວ້າຫຼາຍບົດຄວາມໄດ້ຄາດຄະເນອັດຕາຜູ້ຕິດເຊື້ອພະຍາດໄຂ້ຍຸງລາຍຈະມີປະມານ 100.000 ຄົນ ໂດຍສະເລ່ຍ ໃນ ແຕ່ລະປີທົ່ວປະ

(2). ຍຸງລາຍບ້ານທີ່ມີໂວລບັກເຄຍທີ່ຖ່າຍ ໃນໄລຍະໃກ້

ເທດ.

ວິທີການໂວລບັກເຄຍແມ່ນ ວິທີການຊ່ວຍປ້ອງກັນການສົ່ງຕໍ່ພະຍາດໄຂ້ຍຸງລາຍໃນບັນດາສະມາຊິກຂອງຊຸມຊົນ. ກໍລະນີພະຍາດໄຂ້ຍຸງລາຍແມ່ນເກີດຂຶ້ນສູງທີ່ສຸດ ໃນກຸ່ມເດັກນ້ອຍ ແລະ ໄວໜຸ່ມໃນ ສປປ ລາວ, ແລະ ເດັກຍິງແມ່ນມີຄວາມສ່ຽງທີ່ຈະເສຍຊີວິດຍ້ອນພະຍາດດັ່ງກ່າວຫຼາຍກວ່າເດັກຊາຍ. ນອກຈາກນັ້ນ, ພະຍາດໄຂ້ຍຸງລາຍຍັງສ້າງພາລະໃຫ້ແກ່ແມ່ຍິງໃນການເບິ່ງແຍງສະມາຊິກຄອບຄົວຜູ້ທີ່ເຈັບປ່ວຍຍ້ອນໄຂ້ຍຸງລາຍອີກດ້ວຍ.

ທ່ານ ດຣ ຣັດຕະນະໄຊ ເພັດສຸວັນ ຫົວໜ້າກົມຄວບຄຸມພະຍາດຕິດຕໍ່ ກະຊວງສາທາລະນະສຸກ ໄດ້ກ່າວວ່າ: "ໃນໄລຍະສາມທົດສະວັດທີ່ຜ່ານມາ, ສປປ ລາວ ໄດ້ນຳໃຊ້ຫຼາກຫຼາຍວິທີ ໃນການຄວບຄຸມພະຍາດໄຂ້ຍຸງລາຍ. ຍົກຕົວຢ່າງເຊັ່ນ: ການຫຼຸດຜ່ອນ ແຫຼ່ງເພາະພັນຂອງຍຸງລວມທັງການໃຊ້ຢາເຄມີໃນການຂ້າຍຸງ, ແຕ່ວ່າການແຜ່ລະບາດຂອງພະຍາດໄຂ້ຍຸງລາຍຍັງຄົງເປັນບັນຫາຫຼັກທີ່ຈະຕ້ອງແກ້ໄຂ". ທ່ານໄດ້ກ່າວຕື່ມວ່າ: "ພວກເຮົາຫວັງວ່າໂຄງການປ່ອຍຍຸງໂວລບັກເຄຍນີ້ຈະປະສົບຜົນສຳເລັດ ແລະ ให้ ຜົນໄດ້ຮັບທີ່ຫນ້າພໍໃຈ. ຖ້າເປັນເຊັ່ນນັ້ນ, ພວກເຮົາພ້ອມແລ້ວທີ່ຈະສະໜັບສະໜູນການຂະຫຍາຍໂຄງການໄປສູບັນດາເມືອງ ແລະ ແຂວງອື່ນໆຂອງ ສປປ ລາວ".

ທ່ານ ນາງ ເມແກນ ຈອນສ ເອກອັກຄະລັດຖະທູດອິສຕຣາລີປະຈຳ ສປປ ລາວ ໄດ້ກ່າວວ່າ: "ການຮ່ວມມືກັນລະຫວ່າງອິສຕຣາລີ ແລະ ສປປ ລາວ ໄດ້ຖືກສ້າງຂຶ້ນເຖິງຄວາມສຳພັນທາງການທູດທີ່ເປັນເວລາຍາວນານເກືອບ 72 ປີ. ຂ້າພະເຈົ້າ, ໃນນາມລັດຖະບານອິສຕຣາລີ ຮູ້ສຶກຍິນດີທີ່ຈະໄດ້ເຮັດວຽກຮ່ວມກັບກະຊວງສາທາລະນະສຸກ, ອົງການຊ່ວຍເຫຼືອເດັກສາກົນປະຈຳ ສປປ ລາວ ແລະ ໂຄງການຄວບຄຸມປະຊາກອນຍຸງໂລກໃນການຂະຫຍາຍຂອບເຂດການນຳໃຊ້ນະວັດຕະກຳທີ່ສ້າງໂດຍອິສຕຣາລີ ເພື່ອຊ່ວຍຫຼຸດຜ່ອນກໍລະນີໄຂ້ຍຸງລາຍ. ໂຄງການໂຕແບບໄດ້ສ້າງແບບຢ່າງທີ່ດີ ສຳລັບການຂະຫຍາຍໂຄງການນີ້ໃຫ້ໃຫຍ່ຂຶ້ນ ແລະ ເພື່ອຮັບປະກັນຜົນສຳເລັດໃນອານາຄົດ".

ທ່ານ ລຸກ ເອບຊ ຜູ້ອຳນວຍການອົງການຊ່ວຍເຫຼືອເດັກສາກົນປະຈຳ ສປປ ລາວ ໄດ້ກ່າວເສີມວ່າ: "ອົງການຊ່ວຍເຫຼືອເດັກຮູ້ສຶກພູມໃຈທີ່ໄດ້ຮ່ວມມືກັບລັດຖະບານ ແຫ່ງ ສປປ ລາວ ແລະ ອິສຕຣາລີ, ໂຄງການຄວບຄຸມປະຊາກອນຍຸງໂລກ, ແລະ ຊຸມຊົນທ້ອງຖິ່ນ ໃນການນຳເອົາໂຄງການຊ່ວຍຊີວິດນີ້ເຂົ້າມາໃນລາວ. ວິທີການໂວລບັກເຄຍ ໄດ້ຖືກຢືນຢັນແລ້ວວ່າເປັນວິທີການທີ່ປອດໄພ ແລະ ໄດ້ຜົນ ໃນປະເທດອື່ນໆທີ່ຢູ່ໃນພາກພື້ນດຽວກັນ ແລະ ເປັນວິທີການທີ່ຜ່ານການທົດລອງ ແລະ ທົດສອບແລ້ວວ່າສາມາດຫຼຸດອັດຕາການຕາຍ ແລະ ເຈັບປ່ວຍ ຍ້ອນພະຍາດໄຂ້ຍຸງລາຍ ແລະ ພະຍາດອື່ນໆທີ່ມີຍຸງເປັນພາຫະນຳສິ່ງເຊື້ອ".

ໃນປີ 2022, ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ ຮ່ວມກັບ ກະຊວງສາທາລະນະສຸກ, ໂຄງການຄວບຄຸມປະຊາກອນຍຸງໂລກ ແລະ ຊຸມຊົນໃນພື້ນທີ່ໄດ້ເລີ່ມຈັດຕັ້ງປະຕິບັດໂຄງການ ການປ່ອຍຍຸງລາຍບ້ານທີ່ມີໂວລບັກເຄຍ ໄລຍະທີ່ໜຶ່ງທີ່ນະຄອນຫຼວງວຽງຈັນໃນເນື້ອທີ່ປະມານ 9.4 km^2 (ຊຶ່ງກວມເອົາ 32 ບ້ານທີ່ຢູ່ໃນເມືອງຈັນທະບູລີ ແລະ ໄຊເສດຖາ). ວິທີການໂວລບັກເຄຍແມ່ນນະວັດຕະກຳທີ່ເປັນເອກະລັກຂອງໂຄງການຄວບຄຸມປະຊາກອນຍຸງໂລກ ຊຶ່ງໄດ້ນຳເອົາເຊື້ອແບັກທີເຣຍທີ່ມີຊື່ວ່າ ໂວລບັກເຄຍເຂົ້າໄປໃສ່ໃນປະຊາກອນຍຸງລາຍບ້ານ, ເພື່ອຊ່ວຍຫຼຸດຄວາມສາມາດຂອງຍຸງໃນການນຳສິ່ງເຊື້ອພະຍາດໄຂ້ຍຸງລາຍ, ໄຂ້ປວດຂໍ້ກະດູກ, ໄຂ້ຊິກ້າ ແລະ ໄຂ້ຕິວເຫຼືອງ. ເມື່ອຍຸງທີ່ມີໂວລບັກເຄຍຖືກປ່ອຍໃຫ້ໄປປະສົມພັນກັບຍຸງລາຍບ້ານທ້ອງຖິ່ນ, ໂວລບັກເຄຍຈະຖືກສົ່ງຕໍ່ໄປໃນປະຊາກອນຍຸງທີ່ເກີດໃໝ່ໃນລຸ້ນຕໍ່ໆໄປ ແລະ ເມື່ອຍຸງລາຍບ້ານທັງໝົດມີເຊື້ອບັກທີເຣຍດີດັ່ງກ່າວ ຈຳນວນກໍລະນີໄຂ້ຍຸງລາຍກໍຈະຫຼຸດລົງ. ວິທີການດັ່ງກ່າວໄດ້ຖືກພັດທະນາ ໂດຍນັກວິທະຍາສາດອິສຕຣາລີ ຢູ່ມະຫາວິທະຍາໄລໂມນາຊ ແລະ ປັດຈຸບັນໄດ້ຖືກນຳໄປໃຊ້ໂດຍໂຄງການຄວບຄຸມປະຊາກອນຍຸງໂລກໃນ 14 ປະເທດ, ລວມທັງອິນໂດເນເຊຍ, ຫວຽດນາມ ແລະ ສີລັງກາ. ຜົນການທົດລອງຄວບຄຸມແບບສຸ່ມທີ່ສາມາດຖືເປັນມາດຕະຖານຫລ້າສຸດແມ່ນຢູ່ທີ່ເມືອງໂຍກາຕ້າ, ປະເທດອິນໂດເນເຊຍ, ທີ່ສະແດງໃຫ້ເຫັນອັດຕາການເກີດພະຍາດໄຂ້ຍຸງລາຍທີ່ຫຼຸດລົງເຖິງ 77% ໃນພື້ນທີ່ເຂດປ່ອຍຍຸງໂວລບັກເຄຍ ເມື່ອທຽບກັບເຂດຄວບຄຸມອື່ນໆ.

ເພື່ອຊ່ວຍໃນຫຼຸດຜ່ອນການແຜ່ລະບາດຂອງໄຂ້ຍຸງລາຍໃນ ສປປ ລາວ ແລະ ສະໜັບສະໜູນ

(3). ນັກຮຽນທີ່ຮຽນຢູ່ໂຮງຮຽນທີ່ຢູ່ໃນເຂດພື້ນທີ່ໂຄງການ ສະແດງ ສັນຍາລັກມື ໂວລບັກເຄຍ

ເປົ້າໝາຍຂອງຊາດທີ່ໄດ້ລະບຸໄວ້ໃນຍຸດທະສາດ ແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາໄຂ້ຍຸງລາຍ, ໂຄງການຄວບຄຸມໄຂ້ຍຸງລາຍ ໂດຍການນຳໃຊ້ເຊື້ອບັກທີເຣຍ ໂວລບັກເຄຍ ໄລຍະສອງຈະໄດ້ເລີ່ມຈັດຕັ້ງປະຕິບັດ ໃນເດືອນມີຖຸນາ 2024, ເປັນໄລຍະເວລາ 36 ເດືອນຢູ່ທີ່ນະຄອນຫຼວງວຽງຈັນ.

ກ່ອນການປ່ອຍຍຸງ, ອົງການຊ່ວຍເຫຼືອເດັກຈະເຮັດວຽກຮ່ວມຄູ່ຮ່ວມງານຫຼັກທີ່ກ່ຽວຂ້ອງ ແລະ ຊຸມຊົນທ້ອງຖິ່ນໃນການສ້າງການຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບວິທີການໂວລບັກເຄຍ, ແກ້ໄຂຂໍ້ສົງໄສກັງວົນກ່ຽວກັບວິທີການດັ່ງກ່າວ ແລະ ເພື່ອໃຫ້ໄດ້ຮັບການສະໜັບສະໜູນ ແລະ ຍອມຮັບຈາກທຸກພາກສ່ວນຜ່ານແນວທາງການປ່ຽນແປງພຶດຕິ

(4). ນັກຮຽນທີ່ຮຽນຢູ່ໂຮງຮຽນທີ່ຢູ່ໃນເຂດພື້ນທີ່ໂຄງການ ສະແດງ ສັນຍາລັກມື ໂວລບັກເຄຍ

ກຳທາງສັງຄົມທີ່ມີຄວາມສະເໝີພາບລະຫວ່າງຍິງ-ຊາຍ, ລວມເອົາໝົດທຸກຄົນ ແລະ ສາມາດເຊື່ອມສານໄດ້. ແນວທາງການມີສ່ວນຮ່ວມຂອງຊຸມຊົນຈະອຳນວຍຄວາມສະດວກຕໍ່ວຽກງານການປຶກສາຫາລືທີ່ລວມເອົາໝົດທຸກຄົນໃນຊຸມຊົນ, ເພື່ອຮັບປະກັນການມີສ່ວນຮ່ວມຂອງແມ່ຍິງ, ຄົນພິການ ແລະ ກຸ່ມຄົນດ້ອຍໂອກາດອື່ນໆ. ຜົນກະທົບດ້ານສຸຂະພາບຂອງປະຊາຊົນທີ່ຕິດແທດກັບວຽກງານໂຄງການຄວບຄຸມໄຂ້ຍຸງລາຍ ໂດຍການນຳໃຊ້ເຊື້ອບັກທີເຣຍ ໂວລບັກເຄຍຈະຖືກຕິດຕາມຜ່ານລະບົບການເຝົ້າລະວັງສຸຂະພາບທີ່ມີຢູ່. ການເກັບກຳ ແລະ ວິເຄາະຂໍ້ມູນຈະຖືກປະຕິບັດຕາມແຕ່ໄລຍະທີ່ກຳນົດໄວ້ ເພື່ອປຽບທຽບການແຜ່ກະຈາຍຂອງກໍລະນີໄຂ້ຍຸງລາຍທີ່ຖືກລາຍງານກ່ອນ ແລະ ຫຼັງການສຳເລັດການປ່ອຍຍຸງລາຍໂວລບັກເຄຍ, ໃນເຂດພື້ນທີ່ໂຄງການທຽບກັບພື້ນທີ່ຄວບຄຸມທີ່ກຳນົດໄວ້ລ່ວງໜ້າ.

ຂໍ້ມູນເພີ່ມເຕີມ:

ອົງການຊ່ວຍເຫຼືອເດັກສາກົນ (Save the Children International)

ອົງການຊ່ວຍເຫຼືອເດັກສາກົນແມ່ນໄດ້ເລີ່ມເຂົ້າມາຈັດຕັ້ງປະຕິບັດວຽກງານ ໃນ ສປປ ລາວ ໃນປີ 1987 ແລະ ນັບຕັ້ງແຕ່ນັ້ນມາພວກເຮົາໄດ້ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃນຖານະອົງການທີ່ປົກປ້ອງສິດທິເດັກນ້ອຍໃນລາວ. ອົງການຊ່ວຍເຫຼືອເດັກສາກົນໄດ້ເຮັດວຽກຢ່າງແຂງຂັນ ເພື່ອໃຫ້ໝັ້ນໃຈວ່າເດັກນ້ອຍທຸກຄົນມີສິດ ໄດ້ຮັບການສຶກສາ, ມີສຸກຂະພາບທີ່ດີ, ໄດ້ຮັບການປົກປ້ອງ ແລະ ມີສ່ວນຮ່ວມໃນທຸກໆ ວຽກງານ. ທ່ານສາມາດອ່ານ ຂໍ້ມູນເພີ່ມຕື່ມກ່ຽວກັບອົງການ ຊ່ວຍເຫຼືອ ເດັກສາກົນ ປະ ຈຳ ສປປ ລາວ ໄດ້ທີ່: https://laos.savethechildren.net/.

ໂຄງການຄວບຄຸມ ປະ ຊາກອນ ຍຸ ງ ໂ ລ ກ (World Mosquito Program)

ໂຄງການຄວບຄຸມ ປະ ຊາ ກອ ນ ຍຸ ງ ໂ ລ ກ ແ ມ່ ນ ກຸ ່ ມ ບ ໍ ລ ິ ສ ັ ດ ທ ີ ່ ບ ໍ ່ ສ ະ ແ ຫ ວ ງ ຫ າ ຜ ົ ນ ກ ຳ ໄ ລ ຊ ຶ ່ ງ ມ ີ ມ ະ ຫ າ ວ ິ ທ ະ ຍ າ ໄ ລ ໂ ມ ນ າ ຊ ປ ະ ເ ທ ດ ອ ອ ສ ເ ຕ ເ ລ ຍ ເ ປ ັ ນ ເ ຈ ົ ້ າ ຂ ອ ງ ທ ັ ງ ໝ ົ ດ ຊ ຶ ່ ງ ເ ຮ ັ ດ ວ ຽ ກ ເ ພ ື ່ ອ ປ ົ ກ ປ ້ ອ ງ ຊ ຸ ມ ຊ ົ ນ ທ ົ ່ ວ ໂ ລ ກ ຈ າ ກ ພ ະ ຍ າ ດ ທ ີ ່ ມ ີ ຍ ຸ ງ ເ ປ ັ ນ ພ າ ຫ ະ ນ ຳ ເ ຊ ື ້ ອ ເ ຊ ັ ່ ນ : ໄ ຂ ້ ຍ ຸ ງ ລ າ ຍ , ໄ ຂ ້ ປ ວ ດ ຂ ໍ ້ ກ ະ ດ ູ ກ , ໄ ຂ ້ ຊ ິ ກ ້ າ ແ ລ ະ ໄ ຂ ້ ຕ ິ ວ ເ ຫ ຼ ື ອ ງ . ຫ ຼ ັ ງ ຈ າ ກ ທ ີ ່ ໄ ດ ້ ລ ົ ບ ລ ້ າ ງ ການ ແ ຜ ່ ລ ະ ບ າ ດ ຂ ອ ງ ພ ະ ຍ າ ດ ເ ຫ ຼ ົ ່ າ ນ ີ ້ ອ ອ ກ ໄ ປ ຈ າ ກ ປ ະ ເ ທ ດ ອ ອ ສ ເ ຕ ເ ລ ຍ ແ ລ ້ ວ , ໂ ຄ ງ ການ ຄ ວ ບ ຄ ຸ ມ ປ ະ ຊ າ ກ ອ ນ ຍ ຸ ງ ໂ ລ ກ ໄ ດ ້ ຂ ະ ຫ ຍ າ ຍ ວ ິ ທ ີ ການ ຂ ອ ງ ພ ວ ກ ເ ຂ າ ໄ ປ ສ ູ ່ 14 ປ ະ ເ ທ ດ ທ ີ ່ ວ ອ າ ຊ ີ , ໂ ອ ເ ຊ ຍ ເ ນ ຍ ແ ລ ະ ອ າ ເ ມ ລ ິ ກ າ .

ຂໍ້ມູນເພີ່ມເຕີມກ່ຽວກັບວິທີການ ໂ ວ ລ ບ ັ ກ ເ ຄ ຍ ຂ ອ ງ ໂ ຄ ງ ການ ຄ ວ ບ ຄ ຸ ມ ປ ະ ຊ າ ກ ອ ນ ຍ ຸ ງ

ໂ ວ ລ ບ ັ ກ ເ ຄ ຍ ເ ປ ັ ນ ເ ຊ ື ້ ອ ແ ບ ັ ກ ທ ີ ເ ຣ ຍ ທ ີ ່ ພ ົ ບ ເ ຫ ັ ນ ໄ ດ ້ ຕ າ ມ ປ ົ ກ ກ ະ ຕ ິ ໃ ນ 50% ຂ ອ ງ ແ ມ ງ ໄ ມ ້ ຊ ະ ນ ິ ດ ຕ ່ າ ງ ໆ , ໂ ວ ລ ບ ັ ກ ເ ຄ ຍ ຖ ື ກ ນ ຳ ເ ອ ົ າ ໄ ປ ໃ ສ ່ ໃ ນ ໂ ຕ ຍ ຸ ງ ລ າ ຍ ບ ້ າ ນ ຊ ຶ ່ ງ ເ ປ ັ ນ ພ າ ຫ ະ ນ ຳ ເ ຊ ື ້ ອ ພ ະ ຍ າ ດ ໄ ຂ ້ ຍ ຸ ງ ລ າ ຍ , ໄ ຂ ້ ຊ ິ ກ ້ າ , ໄ ຂ ້ ປ ວ ດ ຂ ໍ ້ ກ ະ ດ ູ ກ ແ ລ ະ ໄ ຂ ້ ຕ ິ ວ ເ ຫ ຼ ື ອ ງ . ເ ຊ ື ້ ອ ຈ ຸ ລ ິ ນ ຊ ີ ໂ ວ ລ ບ ັ ກ ເ ຄ ຍ ທ ີ ່ ຢ ູ ່ ໃ ນ ໂ ຕ ຍ ຸ ງ ນ ັ ້ ນ ຈ ະ ສ າ ມ າ ດ ຢ ັ ບ ຢ ັ ້ ງ ແ ລ ະ ຫ ຼ ຸ ດ ຜ ່ ອ ນ ຄ ວ າ ມ ສ າ ມ າ ດ ຂ ອ ງ ຍ ຸ ງ ໃ ນ ການ ສ ິ ່ ງ ເ ຊ ື ້ ອ ພ ະ ຍ າ ດ ເ ຫ ຼ ົ ່ າ ນ ີ ້ ໄ ປ ຫ າ ຄ ົ ນ ໄ ດ ້ .

ຍ ຸ ງ ທ ີ ່ ມ ີ ໂ ວ ລ ບ ັ ກ ເ ຄ ຍ ແ ມ ່ ນ ຈ ະ ຖ ື ກ ປ ່ ອ ຍ ໃ ນ ພ ື ້ ນ ທ ີ ່ ທ ີ ່ ມ ີ ການ ແ ຜ ່ ລ ະ ບ າ ດ ຂ ອ ງ ພ ະ ຍ າ ດ ທ ີ ່ ມ ີ ຍ ຸ ງ ເ ປ ັ ນ ພ າ ຫ ະ ນ ຳ ເ ຊ ື ້ ອ . ເ ມ ື ່ ອ ຍ ຸ ງ ດ ັ ່ ງ ກ ່ າ ວ ໄ ປ ແ ຜ ່ ພ ັ ນ ກ ັ ບ ຍ ຸ ງ ພ ື ້ ນ ທ ີ ່ ແ ລ ້ ວ , ຈ ຳ ນ ວ ນ ຍ ຸ ງ ເ ກ ີ ດ ໃ ໝ ່ ທ ີ ່ ມ ີ ໂ ວ ລ ບ ັ ກ ເ ຄ ຍ ກ ໍ ຈ ະ ຄ ່ ອ ຍ ເ ພ ີ ່ ມ ຂ ຶ ້ ນ ຕ າ ມ ເ ວ ລ າ ຈ ົ ນ ກ ວ ່ າ ປ ະ ຊ າ ກ ອ ນ ຍ ຸ ງ ດ ັ ່ ງ ກ ່ າ ວ ເ ພ ີ ່ ມ ສ ູ ງ ຕ າ ມ ທ ີ ່ ກ ຳ ນ ົ ດ ໄ ວ ້ ຈ າ ກ ນ ັ ້ ນ ການ ປ ່ ອ ຍ ຍ ຸ ງ ກ ໍ ຈ ະ ສ ິ ້ ນ ສ ຸ ດ ລ ົ ງ ໃ ນ ພ ື ້ ນ ທ ີ ່ ນ ັ ້ ນ ໆ ຫ ຼ ື ບ ໍ ່ ມ ີ ການ ປ ່ ອ ຍ ຍ ຸ ງ ຕ ື ມ ອ ີ ກ .

ບ ໍ ່ ຄ ື ກ ັ ບ ວ ິ ທ ີ ການ ອ ື ່ ນ ໆ , ວ ິ ທ ີ ການ ໂ ວ ລ ບ ັ ກ ເ ຄ ຍ ແ ມ ່ ນ ປ ອ ດ ໄ ພ ສ ຳ ລ ັ ບ ທ ຸ ກ ຄ ົ ນ , ຍ ຸ ງ ແ ລ ະ ສ ິ ່ ງ ແ ວ ດ ລ ້ ອ ມ ແ ລ ະ ເ ປ ັ ນ ວ ິ ທ ີ ການ ທ ີ ່ ຍ ືນ ຍ ົ ງ ແ ລ ະ ຢ ູ ່ ໄ ດ ້ ຕ ົ ວ ຂ ອ ງ ມ ັ ນ ເ ອ ງ ໃ ນ ການ ຄ ວ ບ ຄ ຸ ມ ການ ແ ຜ ່ ລ ະ ບ າ ດ ແ ລ ະ ຜ ົ ນ ກ ະ ທ ົ ບ ຂ ອ ງ ໄ ຂ ້ ຍ ຸ ງ ລ າ ຍ , ໄ ຂ ້ ປ ວ ດ ຂ ໍ ້ ກ ະ ດ ູ ກ , ໄ ຂ ້ ຊ ິ ກ ້ າ ແ ລ ະ ໄ ຂ ້ ຕ ິ ວ ເ ຫ ຼ ື ອ ງ .

(5). ອາສາສະໝັກບ້ານທີ່ຊ່ວຍໃນການຢາຍຈອກຍຸງຖ່າຍຮູບກັບ ຈອກປ່ອຍຍຸງໃນເຂດບ້ານທີ່ຢູ່ໃນເຂດພື້ນທີ່ໂຄງການ

(6). ອາສາສະໝັກບ້ານທີ່ຊ່ວຍໃນການຢາຍຈອກຍຸງສະແດງສັນ ຍາລັກມື ໂວລບັກເຄຍ